**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ 365 /ລບ

ນະຄອນຫຼວງວຽງຈັນ, ວັນທີ 21/08/24

# ດຳລັດ
# ວ່າດ້ວຍການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 5059/ກປ, ລົງວັນທີ 21 ທັນວາ 2023.

**ລັດຖະບານ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ປ່າໄມ້ ໃນການປັບໃໝ ແລະ ການປະຕິບັດມາດຕະການຕໍ່ຜູ້ລະເມີດ ຢ່າງຖືກຕ້ອງ, ເຂັ້ມງວດ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ສະກັດກັ້ນ, ຕ້ານການທຳລາຍປ່າໄມ້ທຸກຮູບແບບ, ຍົກສູງສະຕິຕື່ນຕົວຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ໃຫ້ຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການປັບໃໝ ແລະ ມາດຕະການອື່ນ**

ການປັບໃໝ ແມ່ນ ມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຕາມອັດຕາຄ່າປັບໃໝທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ມາດຕະການອື່ນ ແມ່ນ ການນຳໃຊ້ມາດຕະການເພີ່ມຈາກມາດຕະການປັບໃໝ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ເປັນຕົ້ນ ການສຶກສາອົບຮົມ, ການຍຶດ ເຄື່ອງມື, ອຸປະກອນ, ພາຫະນະ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຄື່ອງມື, ອຸປະກອນ** ໝາຍເຖິງ ເລື່ອຍມື, ຂວານ, ພ້າ, ມີດ, ອຸປະກອນສື່ສານ ແລະ ເຄື່ອງມືອື່ນ;

2. **ພາຫະນະ** ໝາຍເຖິງ ລໍ້ຍູ້, ລົດຖີບ, ລົດຈັກ, ລົດໄຖນາເດີນຕາມ, ລົດໄຖໃຫຍ່, ລົດຊິ້ງ, ລົດສາມລໍ້, ສີ່ລໍ້, ຫົກລໍ້, ສິບລໍ້ຂຶ້ນໄປ, ລົດພ່ວງ, ເຮືອໂດຍສານ, ເຮືອຫາງຍາວ ແລະ ຍານພາຫະນະອື່ນ;

3. **ລາຄາຕະຫຼາດ** ໝາຍເຖິງ ລາຄາທີ່ຊື້-ຂາຍທົ່ວໄປ ຢູ່ໃນເຂດ ຫຼື ທ້ອງຖິ່ນໃດໜຶ່ງ;

4. **ການປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ** ໝາຍເຖິງ ຂະບວນການຜະລິດໃດໜຶ່ງ ຊຶ່ງນຳໃຊ້ອຸປະ ກອນ, ເຄື່ອງຈັກ, ເຕັກໂນໂລຊີ ຫຼື ແຮງງານຄົນ ເຂົ້າໃນຂະບວນການຜະລິດ;

5. **ມູນຄ່າຄວາມເສຍຫາຍ** ໝາຍເຖິງ ຄວາມເສຍຫາຍທາງດ້ານຊັບພະຍາກອນປ່າໄມ້ ເປັນຕົ້ນ ໄມ້, ເຄື່ອງປ່າຂອງດົງ, ຊີວະນານາພັນ ແລະ ຊັບພະຍາກອນອື່ນ ທີ່ເກີດຈາກການລະເມີດ ໂດຍຄິດໄລ່ເປັນເງິນ.

**ມາດຕາ 4 ຫຼັກການກ່ຽວກັບການປັບໃໝ ແລະ ມາດຕະການອື່ນ**

ການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;
2. ຄຸ້ມຄອງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນຄວາມ ເປັນລະບຽບຮຽບຮ້ອຍ, ວ່ອງໄວ, ມີປະສິດທິພາບ ແລະ ປະສິດທິຜົນສູງ;
4. ຮັບປະກັນການປະຕິບັດອັດຕາຄ່າປັບໃໝ ເປັນເອກະພາບ, ຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ຢູ່ ສປປ ລາວ.

## ໝວດທີ 2
## ການປັບໃໝ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບປ່າໄມ້

**ມາດຕາ 6 ການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ປະຕິບັດຕາມຂັ້ນຕອນ ແລະ ລະບຽບການ ຢ່າງຖືກຕ້ອງ, ຄົບຖ້ວນ ຈາກຂະແໜງການກະສິກຳ ແລະ ປ່າໄມ້ ຈະຖືກປັບໃໝ ດັ່ງນີ້:

1. ສາມເທົ່າ ຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສີ່ເທົ່າ ຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ສຳລັບການລະເມີດຄັ້ງທີສອງ;
3. ຫ້າເທົ່າ ຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ສຳລັບການລະເມີດຄັ້ງທີສາມ ຂຶ້ນໄປ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເອົາໃບອະນຸຍາດຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ຜູ້ອື່ນນຳໃຊ້ ຈະຖືກປັບໃໝ ສາມເທົ່າ ຂອງມູນຄ່າຄວາມເສຍຫາຍ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຊຶ່ງສ້າງຜົນເສຍຫາຍ ຕໍ່າກວ່າ 5.000.000 ກີບ ຈະຖືກປັບໃໝ ດັ່ງນີ້:

1. ສາມເທົ່າ ຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສີ່ເທົ່າ ຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ສຳລັບການລະເມີດຄັ້ງທີສອງ;
3. ຫ້າເທົ່າ ຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ສຳລັບການລະເມີດຄັ້ງທີສາມ ຂຶ້ນໄປ.

**ມາດຕາ 7 ການຖາງປ່າ, ຈູດປ່າ ຫຼື ທຳລາຍປ່າໄມ້**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ ຖາງປ່າ, ຈູດປ່າ ຫຼື ທຳລາຍປ່າໄມ້ດ້ວຍວິທີການອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຊຶ່ງສ້າງຜົນເສຍຫາຍ ຕໍ່າກວ່າ 5.000.000 ກີບ ຈະຖືກປັບໃໝ ດັ່ງນີ້:

1. ສາມເທົ່າ ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສີ່ເທົ່າ ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີສອງ;
3. ຫ້າເທົ່າ ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີສາມ ຂຶ້ນໄປ.

**ມາດຕາ 8 ການຕັດ, ຊື້-ຂາຍ ຫຼື ເຄື່ອນຍ້າຍໄມ້, ຕໍໄມ້ ແລະ ເຄື່ອງປ່າຂອງດົງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ ຕັດ, ຊື້-ຂາຍ ຫຼື ເຄື່ອນຍ້າຍໄມ້, ຕໍໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ສາມເທົ່າ ຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສີ່ເທົ່າ ຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ສຳລັບການລະເມີດຄັ້ງທີສອງ;
3. ຫ້າເທົ່າ ຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ສຳລັບການລະເມີດຄັ້ງທີສາມ ຂຶ້ນໄປ.

ສຳລັບ ການຕັດ, ຊື້-ຂາຍ ຫຼື ເຄື່ອນຍ້າຍໄມ້, ຕໍໄມ້ ແລະ ເຄື່ອງປ່າຂອງດົງ ບັນຊີ I ໂດຍບໍ່ໄດ້ຮັບອະນຸຍາດ ຊຶ່ງສ້າງຜົນເສຍຫາຍ ຕໍ່າກວ່າ 5.000.000 ກີບ ຈະຖືກປັບໃໝ ດັ່ງນີ້:

1. ສາມເທົ່າ ຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສີ່ເທົ່າ ຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ສຳລັບການລະເມີດຄັ້ງທີສອງ;
3. ຫ້າເທົ່າ ຂອງມູນຄ່າຄວາມເສຍຫາຍຕາມລາຄາຕະຫຼາດ ສຳລັບການລະເມີດຄັ້ງທີສາມ ຂຶ້ນໄປ.

**ມາດຕາ 9 ການ ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານ ໄມ້, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານໄມ້, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ສາມເທົ່າ ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສີ່ເທົ່າ ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີສອງ;
3. ຫ້າເທົ່າ ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີສາມ ຂຶ້ນໄປ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານໄມ້, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ແຕ່ບໍ່ປະຕິບັດຕາມເງື່ອນໄຂ ຈະຖືກປັບໃໝ ດັ່ງນີ້:

1. 10.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2. 20.000.000 ກີບ ສຳລັບການລະເມີດຄັ້ງທີສອງ;
3. 30.000.000 ກີບ ສຳລັບການລະເມີດຄັ້ງທີສາມ ຂຶ້ນໄປ.

**ມາດຕາ 10 ການປຸງແຕ່ງ, ມີໄວ້ຄອບຄອງໄມ້ ແລະ ເຄື່ອງປ່າຂອງດົງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກນຳເອົາ ໄມ້ ແລະ ເຄື່ອງປ່າຂອງດົງມາ ປຸງແຕ່ງ, ມີໄວ້ຄອບຄອງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ສາມເທົ່າ ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສີ່ເທົ່າ ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີສອງ;
3. ຫ້າເທົ່າ ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີສາມ ຂຶ້ນໄປ.

**ມາດຕາ 11 ການສ້າງຕັ້ງ ໂຮງງານອຸດສາຫະກຳປຸງແຕ່ງໄມ້**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສ້າງຕັ້ງ ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້, ໂຮງງານເຟີນີເຈີ ແລະ ໂຮງເຟີນີເຈີແບບຄອບຄົວ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. 5.000.000 ກີບ ສຳລັບໂຮງເຟີນີເຈີ ແບບຄອບຄົວ;

2. 20.000.000 ກີບ ສຳລັບໂຮງງານຂະໜາດນ້ອຍ;
3. 40.000.000 ກີບ ສຳລັບໂຮງງານຂະໜາດກາງ;
4. 100.000.000 ກີບ ສຳລັບໂຮງງານຂະໜາດໃຫຍ່.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງ ໂຮງງານເລື່ອຍໄມ້, ໂຮງງານປຸງແຕ່ງໄມ້, ໂຮງງານເຟີນິເຈີ ແລະ ໂຮງເຟີນິເຈີແບບຄອບຄົວ ແຕ່ດຳເນີນກິດຈະການ ຫຼື ເຄື່ອນໄຫວບໍ່ຖືກຕ້ອງຕາມການອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ໂຮງເຟີນິເຈີ ແບບຄອບຄົວ:
   - 2.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
   - 5.000.000 ກີບ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.
2. ໂຮງງານຂະໜາດນ້ອຍ:
   - 5.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
   - 10.000.000 ກີບ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.
3. ໂຮງງານຂະໜາດກາງ:
   - 10.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
   - 20.000.000 ກີບ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.
4. ໂຮງງານຂະໜາດໃຫຍ່:
   - 20.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
   - 50.000.000 ກີບ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.

**ມາດຕາ 12 ການສ້າງຕັ້ງ ໂຮງງານປຸງແຕ່ງ ເຄື່ອງປ່າຂອງດົງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສ້າງຕັ້ງ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. 5.000.000 ກີບ ສຳລັບໂຮງງານແບບຄອບຄົວ;
2. 20.000.000 ກີບ ສຳລັບໂຮງງານຂະໜາດນ້ອຍ;
3. 40.000.000 ກີບ ສຳລັບໂຮງງານຂະໜາດກາງ;
4. 100.000.000 ກີບ ສຳລັບໂຮງງານຂະໜາດໃຫຍ່.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ໃຫ້ສ້າງຕັ້ງ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແຕ່ດຳເນີນກິດຈະການ ຫຼື ເຄື່ອນໄຫວບໍ່ຖືກຕ້ອງຕາມການອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ໂຮງງານແບບຄອບຄົວ:
   - 2.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
   - 5.000.000 ກີບ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.
2. ໂຮງງານຂະໜາດນ້ອຍ:
   - 5.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
   - 10.000.000 ກີບ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.
3. ໂຮງງານຂະໜາດກາງ:
   - 10.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
   - 20.000.000 ກີບ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.
4. ໂຮງງານຂະໜາດໃຫຍ່:
   - 20.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
   - 50.000.000 ກີບ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.

**ມາດຕາ 13 ການສ້າງຕັ້ງໂຮງງານຜະລິດຖ່ານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສ້າງຕັ້ງໂຮງງານຜະລິດຖ່ານ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. 5.000.000 ກີບ ສຳລັບເຕົາເຜົາຖ່ານແບບຄອບຄົວ;
2. 20.000.000 ກີບ ສຳລັບໂຮງງານຂະໜາດນ້ອຍ;
3. 40.000.000 ກີບ ສຳລັບໂຮງງານຂະໜາດກາງ;
4. 100.000.000 ກີບ ສຳລັບໂຮງງານຂະໜາດໃຫຍ່.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ໃຫ້ສ້າງຕັ້ງ ໂຮງງານຜະລິດຖ່ານ ແຕ່ດຳເນີນກິດຈະການ ຫຼື ເຄື່ອນໄຫວບໍ່ຖືກຕ້ອງຕາມການອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ເຕົາເຜົາຖ່ານ ແບບຄອບຄົວ:
   - 2.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
   - 5.000.000 ກີບ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.
2. ໂຮງງານຂະໜາດນ້ອຍ:
   - 5.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
   - 10.000.000 ກີບ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.
3. ໂຮງງານຂະໜາດກາງ:
   - 10.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
   - 20.000.000 ກີບ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.
4. ໂຮງງານຂະໜາດໃຫຍ່:
   - 20.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
   - 50.000.000 ກີບ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.

**ມາດຕາ 14 ການ ຍ້າຍ, ປ່ຽນແປງ ຫຼື ທຳລາຍ ປ້າຍ ຫຼື ເຄື່ອງໝາຍເຂດແດນ ປ່າໄມ້**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ ເຄື່ອນຍ້າຍ, ປ່ຽນແປງ ຫຼື ທຳລາຍ ປ້າຍ ຫຼື ຫຼັກໝາຍເຂດແດນປ່າໄມ້ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. ສາມເທົ່າ ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີໜຶ່ງ;
2. ສີ່ເທົ່າ ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີສອງ;
3. ຫ້າເທົ່າ ຂອງມູນຄ່າຄວາມເສຍຫາຍ ສຳລັບການລະເມີດຄັ້ງທີສາມ ຂຶ້ນໄປ.

**ມາດຕາ 15 ການນຳເຂົ້າ ຫຼື ຄອບຄອງ ເຄື່ອງຈັກຕັດໄມ້**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳເຂົ້າເຄື່ອງຈັກຕັດໄມ້ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. 30.000.000 ກີບ ສຳລັບການລະເມີດຄັ້ງທີໜຶ່ງ;
2. 50.000.000 ກີບ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຄອບຄອງ ເຄື່ອງຈັກຕັດໄມ້ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. 300.000 ກີບ ຕໍ່ເຄື່ອງ ສຳລັບການລະເມີດຄັ້ງທີໜຶ່ງ;
2. 600.000 ກີບ ຕໍ່ເຄື່ອງ ສຳລັບການລະເມີດຄັ້ງທີສອງ ຂຶ້ນໄປ.

## ໝວດທີ 3
## ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້

**ມາດຕາ 16 ມາດຕະການອື່ນ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ນອກຈາກຖືກປັບໃໝ ຕາມດຳລັດສະບັບນີ້ແລ້ວ ຍັງຈະຖືກ ກ່າວເຕືອນ, ເຮັດບົດບັນທຶກ, ຍຶດ ເຄື່ອງຈັກຕັດໄມ້, ເຄື່ອງມື . ອຸປະກອນ ທີ່ນຳໃຊ້ເຂົ້າໃນການລະເມີດ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 17 ມາດຕະການອື່ນ ຕໍ່ຜູ້ດຳເນີນກິດຈະການ**

ຜູ້ດຳເນີນກິດຈະການ ຫາກໄດ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ນອກຈາກຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ແລ້ວ ຍັງຖືກປະຕິບັດມາດຕະການອື່ນ ດັ່ງນີ້:

1. ກ່າວເຕືອນ, ເຮັດບົດບັນທຶກ, ຍຶດ ເຄື່ອງຈັກຕັດໄມ້, ເຄື່ອງມື, ອຸປະກອນ ແລະ ພາຫະນະ ທີ່ນຳໃຊ້ເຂົ້າໃນການລະເມີດ ພ້ອມທັງ ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ ສຳລັບການລະເມີດຄັ້ງທີໜຶ່ງ;
2. ເຮັດບົດບັນທຶກ, ຍຶດ ເຄື່ອງຈັກຕັດໄມ້, ເຄື່ອງມື, ອຸປະກອນ ແລະ ພາຫະນະ ທີ່ນຳໃຊ້ເຂົ້າໃນການລະເມີດ, ໂຈະໃບອະນຸຍາດ ພ້ອມທັງ ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ ສຳລັບການລະເມີດຄັ້ງທີສອງ;
3. ເຮັດບົດບັນທຶກ, ຍຶດ ເຄື່ອງຈັກຕັດໄມ້, ເຄື່ອງມື, ອຸປະກອນ ແລະ ພາຫະນະ ທີ່ນຳໃຊ້ເຂົ້າໃນການລະເມີດ, ຖອນໃບອະນຸຍາດ ພ້ອມທັງ ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ ສຳລັບການລະເມີດຄັ້ງທີສາມ.

## ໝວດທີ 4
## ການຄຸ້ມຄອງ ຊັບທີ່ຖືກຍຶດ, ການຊຳລະ ແລະ ການນຳໃຊ້ ເງິນປັບໃໝ

**ມາດຕາ 18 ການຄຸ້ມຄອງຊັບທີ່ຖືກຍຶດ**

ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງຮັກສາ ແລະ ເກັບມ້ຽນ ຊັບທີ່ຖືກຍຶດ ໄວ້ເປັນຢ່າງດີ ແລະ ເຈົ້າຂອງຊັບດັ່ງກ່າວ ຕ້ອງຮັບຜິດຊອບຄ່າປົກປັກຮັກສາ ໂດຍຄິດໄລ່ ດັ່ງນີ້:

1. 3.000 ກີບ ຕໍ່ ວັນ ສຳລັບ ເຄື່ອງຈັກຕັດໄມ້, ເຄື່ອງມື, ອຸປະກອນ, ລໍ້, ລົດຖີບ ແລະ ລົດຈັກ;
2. 6.000 ກີບ ຕໍ່ ວັນ ສຳລັບ ລົດໄຖທຸກປະເພດ, ລົດສາມລໍ້, ເຮືອຫາງຍາວ;
3. 9.000 ກີບ ຕໍ່ ວັນ ສຳລັບສຳລັບລົດ ເກັງ, ກະບະ, ຈິບ ແລະ ຕູ້;
4. 15.000 ກີບ ຕໍ່ ວັນ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ ແລະ ກາງ;
5. 20.000 ກີບ ຕໍ່ ວັນ ສຳລັບ ລົດສິບລໍ້ຂຶ້ນໄປ, ລົດພ່ວງ ແລະ ເຮືອໂດຍສານ ທຸກປະເພດ;
6. 30.000 ກີບ ຕໍ່ ແມັດກ້ອນ ຕໍ່ວັນ ສຳລັບໄມ້ ແລະ ຜະລິດຕະພັນໄມ້;
7. 40.000 ກີບ ຕໍ່ ໂຕນ ຕໍ່ ວັນ ສຳລັບ ເຄື່ອງປ່າຂອງດົງ.

ໃນໄລຍະທີ່ເກັບຮັກສາຊັບທີ່ຖືກຍຶດນັ້ນ ບໍ່ອະນຸຍາດໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ນຳໃຊ້ຊັບດັ່ງກ່າວ. ໃນກໍລະນີລະເມີດ ຈະຖືກລົງວິໄນ ແລະ ໃຫ້ຮັບຜິດຊອບຄ່າເສຍຫາຍທີ່ເກີດຂຶ້ນ.

**ມາດຕາ 19 ການຊຳລະເງິນຄ່າປັບໃໝ ແລະ ຄ່າປົກປັກຮັກສາຊັບທີ່ຖືກຍຶດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ຕ້ອງຊຳລະເງິນຄ່າປັບໃໝ ແລະ ຄ່າປົກປັກຮັກສາຊັບທີ່ຖືກຍຶດ ໃຫ້ເຈົ້າໜ້າທີ່ປ່າໄມ້.

**ມາດຕາ 20 ການນຳໃຊ້ເງິນ ທີ່ໄດ້ຮັບຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ຕາມດຳລັດສະບັບນີ້ ຫົກສິບສ່ວນຮ້ອຍ (60%) ໃຫ້ມອບເຂົ້າງົບປະມານແຫ່ງລັດ, ສ່ວນເງິນທີ່ເຫຼືອ ສີ່ສິບສ່ວນຮ້ອຍ (40%) ມອບເຂົ້າກອງທຶນປົກປັກຮັກສາປ່າໄມ້ ເພື່ອນຳໃຊ້ເຂົ້າໃນວຽກງານປ່າໄມ້ ຕາມທີ່ໄດ້ກຳ ນົດໄວ້ໃນມາດຕາ 21 ຂອງດຳລັດສະບັບນີ້.

**ມາດຕາ 21 ເປົ້າໝາຍການນຳໃຊ້ເງິນທີ່ໄດ້ຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ໂຄສະນາເຜີຍແຜ່ ກົດໝາຍ, ດຳລັດ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານປ່າໄມ້;
2. ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດວຽກງານປ່າໄມ້;
3. ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ໂດຍຈ່າຍເປັນເງິນ ອຸດໜູນ ໃຫ້ເຈົ້າໜ້າທີ່ ແລະ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ປະຕິບັດໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປ່າໄມ້;
4. ການເກັບມ້ຽນ, ການປົກປັກຮັກສາ ແລະ ການທຳລາຍຂອງກາງທີ່ຍຶດມາໄດ້;
5. ການຈັດຊື້ ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່;
6. ວຽກງານອື່ນ ທີ່ກ່ຽວຂ້ອງກັບວຽກງານປ່າໄມ້.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 23 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 01 ກັນຍາ 2024 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**